**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ 1284

ກົມການຄ້າຕ່າງປະເທດ ເລກທີ /ກຄຕ

ນະຄອນຫຼວງວຽງຈັນ, ວັນທີ 13 ມີນາ 2025

# <u>ແຈ້ງການ</u>

**ເຖິງ:** ບັນດາບໍລິສັດນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ສືບຕໍ່ອາຍຸໃບຢັ້ງຢືນການລົງທະບຽນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມການຄ້າຕ່າງປະເທດ ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2080/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 0752/ອຄ, ລົງວັນທີ 23 ພຶດສະພາ 2023;
- ອີງຕາມ ແຈ້ງການດັດສົມຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 2972/ຫອຄ, ລົງວັນທີ 31 ຕຸລາ 2024.

ເພື່ອເປັນການດັດສົມຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ໃຫ້ທັນໄປສູ່ການຂາຍຍົກ-ຂາຍຍ່ອຍ ແລະ ດັດສົມຜູ້ທີ່ບໍ່ມີການເຄື່ອນໄຫວຕົວຈິງ. ສະນັ້ນ, ກົມການຄ້າຕ່າງປະເທດ (ກຄຕ), ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາເພື່ອຊາບວ່າ ແລະ ປະຕິບັດ ດັ່ງນີ້:

1. ໃຫ້ວິສາຫະກິດ ທີ່ໃບຢັ້ງຢືນລົງທະບຽນເປັນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ທີ່ໝົດອາຍຸແລ້ວ ຮີບຮ້ອນມາຕໍ່ອາຍຸ. ການຕໍ່ອາຍຸ ສາມາດດຳເນີນໃນລະບົບການລົງທະບຽນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ຜ່ານເວບໄຊ໌ຂອງ ກຄຕ https://imex-enterprise.Laoconnect.la ໂດຍເອກະສານ ແລະ ເງື່ອນໄຂຂອງການຕໍ່ອາຍຸແມ່ນອີງໃສ່ແຈ້ງການດັດສົມຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 2972/ຫອຄ, ລົງວັນທີ 31 ຕຸລາ 2024.
2. ໃຫ້ວິສາຫະກິດທີ່ໄດ້ລົງທະບຽນ ແຕ່ບໍ່ມີການເຄື່ອນໄຫວດຳເນີນກິດຈະການນຳເຂົ້າ-ສົ່ງອອກສິນຄ້າຕົວຈິງ ຜ່ານລະບົບລະບົບແຈ້ງພາສີປະຕູດຽວແຫ່ງຊາດ (NSWA+) ມາຊີ້ແຈງເຫດຜົນທີ່ບໍ່ມີການເຄື່ອນໄຫວ ນຳກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ. ສຳລັບວິສາຫະກິດທີ່ຢູ່ຕ່າງແຂວງ ແມ່ນໃຫ້ໄປພົວພັນຊີ້ແຈ້ງນຳ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
3. ການຈັດຕັ້ງປະຕິບັດ ຂໍ້ 01 ແລະ 02 ຂ້າງເທິງ ຕ້ອງສຳເລັດ **ກ່ອນວັນທີ 31 ມີນາ 2025.** ວິສາຫະກິດໃດ ທີ່ບໍ່ສຳເລັດຕາມກຳນົດເວລາດັ່ງກ່າວ ແມ່ນຈະຖືກຖອນໃບຢັ້ງຢືນລົງທະບຽນເປັນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ລວມເຖິງລະງັບບັນຊີສະເພາະສຳລັບການຊຳລະສະສາງການນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ໂຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ ກົມການຄ້າຕ່າງປະເທດ

ມ. ມະນີວອນ ວົງໄຊ

(ລາຍຊື່ຫົວໜ່ວຍວິສາຫະກິດທີ່ໝົດອາຍຸຂອງໃບຢັ້ງຢືນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ)

**ຕິດຕໍ່ພົວພັນ**

ກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ພະແນກຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ

ທ່ານ ນາງ ປະລິດາພອນ ພຸດທະວົງ, ເບີໂທ 020 28008333